ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ

ເລກທີ 857 /ຖວທ

ນະຄອນຫຼວງວຽງຈັນ, ວັນທີ 20 ມິຖຸນາ/2024

# ຂໍ້ຕົກລົງ

## ວ່າດ້ວຍການອະນຸມັດເກັບເງິນກອງທຶນການທ່ອງທ່ຽວ ຈາກນັກທ່ອງທ່ຽວພາຍໃນ ແລະ ຕ່າງປະເທດ ດ້ວຍລະບົບ ເອເລັກໂຕຣນິກ ຜ່ານລະບົບທະນາຄານ Easy Pass ຢູ່ ດ່ານສາກົນ ເຂົ້າ-ອອກ ສປປ ລາວ ໃນຂອບເຂດທົ່ວປະເທດ

- ອີງຕາມ ລັດຖະບັນຍັດວ່າດ້ວຍຄ່າທຳນຽມ ແລະ ຄ່າບໍລິການ ສະບັບເລກທີ 002/ປປທ, ລົງວັນທີ 17 ມິຖຸນາ 2021;
- ອີງຕາມ ດຳລັດວ່າດ້ວຍກອງທຶນການທ່ອງທ່ຽວ ສະບັບເລກທີ 119/ລບ, ລົງວັນທີ 10 ເມສາ 2017;
- ອີງຕາມ ດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ສະບັບເລກທີ 678/ນຍ, ລົງວັນທີ 21 ທັນວາ 2021;
- ອີງຕາມ ແຈ້ງການຂອງກະຊວງການເງິນ ກ່ຽວກັບ ການນຳເອົາການເກັບລາຍຮັບພັນທະກອງທຶນການທ່ອງທ່ຽວ ເຂົ້າໃນລະບົບຈັດເກັບຄ່າທຳນຽມ ແລະ ຄ່າບໍລິການ ຜ່ານລະບົບທະນາຄານ (Easy Pass) ຢູ່ ດ່ານສາກົນໃນຂອບເຂດທົ່ວປະເທດ ສະບັບເລກທີ 1166/ຫກ, ລົງວັນທີ 4 ພຶດສະພາ 2023.

## ລັດຖະມົນຕີ ອອກຂໍ້ຕົກລົງ:

**ມາດຕາ 1** ເຫັນດີອະນຸມັດໃຫ້ຈັດເກັບລາຍຮັບເງິນກອງທຶນການທ່ອງທ່ຽວ ຈາກນັກທ່ອງທ່ຽວພາຍໃນ ແລະ ຕ່າງປະເທດ ດ້ວຍລະບົບຈັດເກັບຄ່າທຳນຽມ ແລະ ຄ່າບໍລິການຜ່ານລະບົບທະນາຄານ Easy Pass ຢູ່ ດ່ານສາກົນ ເຂົ້າ-ອອກ ສປປ ລາວ ໃນຂອບເຂດທົ່ວປະເທດ ລາຍລະອຽດມີ ດັ່ງນີ້:

1. ເກັບຈາກນັກທ່ອງທ່ຽວຕ່າງປະເທດ ທີ່ເດີນທາງເຂົ້າມາທ່ອງທ່ຽວ ຢູ່ ສປປ ລາວ ເປັນລາຍບຸກຄົນ ຫຼື ເປັນຄະນະ ໂດຍຜ່ານ ຫຼື ບໍ່ຜ່ານການບໍລິການຂອງບໍລິສັດນຳທ່ຽວ ພາຍໃນ ແລະ ຕ່າງປະເທດ ໃນອັດຕາ 10.000 ກີບ (ສິບພັນກີບ) ຕໍ່ຄົນ ຕໍ່ຄັ້ງ ໃນອັດຕາດຽວກັນທົ່ວປະເທດ ໂດຍເກັບສະເພາະໃນເວລາເຂົ້າປະເທດ ຢູ່ ແຕ່ລະດ່ານສາກົນ ທົ່ວປະເທດ;

2. ເກັບຈາກນັກທ່ອງທ່ຽວພາຍໃນ ທີ່ເດີນທາງໄປທ່ອງທ່ຽວຕ່າງປະເທດ ເປັນລາຍບຸກຄົນ ຫຼື ເປັນຄະນະ ໂດຍຜ່ານ ຫຼື ບໍ່ຜ່ານການບໍລິການຂອງບໍລິສັດນຳທ່ຽວ ພາຍໃນ ແລະ ຕ່າງປະເທດ ໃນອັດຕາ 10.000 ກີບ (ສິບພັນກີບ) ຕໍ່ຄົນ ຕໍ່ຄັ້ງ ໃນອັດຕາດຽວກັນທົ່ວປະເທດ ໂດຍເກັບສະເພາະໃນເວລາອອກປະເທດ ຢູ່ ແຕ່ລະດ່ານສາກົນ ທົ່ວປະເທດ;

3. ບຸກຄົນ ຫຼື ຄະນະທີ່ໄດ້ຮັບການຍົກເວັ້ນການເກັບພັນທະກອງທຶນການທ່ອງທ່ຽວ ມີຄື: ຄົນພິການແຂນ, ຂາ, ຕາບອດ, ເສຍອິງຄະ ຫຼື ຜູ້ປ່ວຍ ທີ່ບໍ່ສາມາດຊ່ວຍເຫຼືອໂຕເອງ, ເດັກນ້ອຍອາຍຸຕ່ຳກວ່າ 15 ປີ, ນັກບວດ, ນັກຮຽນ ແລະ ນັກສຶກສາພາຍໃນ ຫຼື ຕ່າງປະເທດ ທີ່ຢູ່ໃນໄລຍະຂອງການຮຽນ ການສຶກສາ, ຜູ້ອອກແຮງງານປະຈຳໂຮງຈັກໂຮງງານ ຫຼື ວິສາຫະກິດ ແລະ ນັກລົງທຶນພາຍໃນ ຫຼື ຕ່າງປະເທດ ທີ່ໄດ້ຮັບອະນຸຍາດອອກແຮງງານ ຫຼື ລົງທຶນຢ່າງຖືກຕ້ອງ ທີ່ຖືໜັງສືເດີນທາງ ເຂົ້າ-ອອກ ສປປ ລາວ ໄດ້ຫຼາຍຄັ້ງ, ນັກຂັບຂີ່ ພາຍໃນ ຫຼື ຕ່າງປະເທດ ຂັບຂີ່ຍານພາຫານະໂດຍສານປະຈຳທາງ, ແພດ, ໝໍ, ນັກກູ້ໄພ ສຸກເສີນ, ເຈົ້າໜ້າທີ່ຮັກສາຄວາມປອດໄພ, ນັກການທູດ, ພະນັກງານປະຈຳສະຖານທູດ, ກົງສຸນ ແລະ ເຈົ້າໜ້າທີ່ລັດ ທີ່ໄດ້ຮັບອະນຸຍາດຢ່າງຖືກຕ້ອງ ຈາກທາງການ;

4. ເງິນກອງທຶນການທ່ອງທ່ຽວທັງໝົດ ທີ່ເກັບໄດ້ ແມ່ນໃຫ້ມອບໂອນເຂົ້າບັນຊີເງິນກອງທຶນການທ່ອງທ່ຽວ ຂອງກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ, ພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວແຂວງ,

สแกนด้วย CamScanner

ນະຄອນຫຼວງວຽງຈັນ. ຊື່ບັນຊີກອງທຶນການທ່ອງທ່ຽວ ຕາມເລກບັນຊີ 476 ທີ່ເປີດກັບຄັງເງິນແຫ່ງຊາດສູນກາງ ແລະ ຄັງເງິນແຫ່ງຊາດປະຈໍາແຂວງ;

5. ການຈັດຕັ້ງປະຕິບັດ ການເກັບເງິນກອງທຶນການທ່ອງທ່ຽວ ຜ່ານລະບົບທະນາຄານ Easy Pass ໃຫ້ເລີ່ມວັນທີ 01 ກັນຍາ 2024 ເປັນຕົ້ນໄປ ໃນຂອບເຂດທົ່ວປະເທດ;

6. ໃຫ້ຢຸດຕິການເກັບເງິນກອງທຶນການທ່ອງທ່ຽວ ໃນຮູບແບບເກົ່າ ເຊັ່ນ: ການເກັບຜ່ານໃບເຕເລັກ ຫຼື ການເກັບໃນຮູບແບບຕ່າງໆໃນໄລຍະຜ່ານມາ ໂດຍບໍ່ແມ່ນການເກັບໂດຍຜ່ານລະບົບຈັດເກັບຄ່າທໍານຽມ ແລະ ຄ່າບໍລິການຜ່ານລະບົບທະນາຄານ Easy Pass ທີ່ກະຊວງການເງິນເປັນເຈົ້າຂອງລະບົບເພື່ອບໍ່ໃຫ້ມີການເກັບຊໍ້າຊ້ອນຈາກນັກທ່ອງທ່ຽວ ແລະ ການເກັບຢູ່ຫຼາຍບ່ອນ;

7. ສໍາລັບແຂວງທີ່ບໍ່ມີດ່ານ ແລະ ບໍ່ມີລາຍຮັບກອງທຶນການທ່ອງທ່ຽວ ແມ່ນສູນກາງຈະດຸ່ນດ່ຽງເງິນກອງທຶນການທ່ອງທ່ຽວດັ່ງກ່າວ ທີ່ມີແຜນການຂໍນໍາໃຊ້ຢ່າງລະອຽດ ເພື່ອນໍາໄປພິຈາລະນາ ຕາມຄວາມເໝາະສົມ;

**ມາດຕາ 2 ງົບປະມານການລົງກວດກາວຽກງານ**

ງົບປະມານ ແມ່ນນໍາໃຊ້ເງິນກອງທຶນການທ່ອງທ່ຽວ ມອບໃຫ້ຫ້ອງການກະຊວງຖະແຫຼງຂ່າວ, ວັດທະນະທໍາ ແລະ ທ່ອງທ່ຽວ ປະສານສົມທົບກັບພາກສ່ວນກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດ, ການໂຄສະນາເຜີຍແຜ່ ແລະ ການລົງຕິດຕາມກວດກາວຽກງານ ໃຫ້ໄດ້ຮັບຜົນສໍາເລັດ ຕາມລະດັບຄາດໝາຍ.

**ມາດຕາ 3 ການຄຸ້ມຄອງເງິນກອງທຶນການທ່ອງທ່ຽວ**

ມອບໃຫ້ຫ້ອງການກະຊວງຖະແຫຼງຂ່າວ, ວັດທະນະທໍາ ແລະ ທ່ອງທ່ຽວ ເປັນເຈົ້າການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຄຸ້ມຄອງລາຍຮັບ, ສ້າງແຜນລາຍຈ່າຍ ແລະ ສັງລວມລາຍຮັບ-ລາຍຈ່າຍກອງທຶນການທ່ອງທ່ຽວທົ່ວປະເທດ ຕາມກົດໝາຍງົບປະມານ ແລະ ລະບຽບການທີ່ກ່ຽວຂ້ອງ.

ສໍາລັບລາຍຈ່າຍກອງທຶນການທ່ອງທ່ຽວຂອງພະແນກຖະແຫຼງຂ່າວ, ວັດທະນະທໍາ ແລະ ທ່ອງທ່ຽວແຂວງ, ນະຄອນຫຼວງວຽງຈັນ ຕ້ອງໄດ້ຮັບອະນຸມັດແຜນລາຍຈ່າຍ ຈາກພະແນກການເງິນຂອງແຂວງ ແລະ ນະຄອນຫຼວງວຽງຈັນ ທີ່ກ່ຽວຂ້ອງ ແລະ ການຕົກລົງເຫັນດີ ຈາກກະຊວງຖະແຫຼງຂ່າວ, ວັດທະນະທໍາ ແລະ ທ່ອງທ່ຽວ ເພື່ອນໍາໃຊ້ໃຫ້ຖືກຕ້ອງຕາມເປົ້າໝາຍກອງທຶນການທ່ອງທ່ຽວ.

**ມາດຕາ 4 ການຈັດຕັ້ງປະຕິບັດ**

ມອບໃຫ້ຫ້ອງການ, ກົມຄຸ້ມຄອງທຸລະກິດການທ່ອງທ່ຽວ ກະຊວງຖະແຫຼງຂ່າວ, ວັດທະນະທໍາ ແລະ ທ່ອງທ່ຽວ, ຄະນະຮັບຜິດຊອບຕາມຂໍ້ຕົກລົງແຕ່ງຕັ້ງຂອງກະຊວງການເງິນ ສະບັບເລກທີ 2622/ກງ, ລົງວັນທີ 28 ສິງຫາ 2023 ເປັນເຈົ້າການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງຂັ້ນສູນກາງ ແລະ ທ້ອງຖິ່ນ ອອກແຈ້ງການແນະນໍາ, ຄົ້ນຄວ້າວິທີການ, ກົນໄກການເກັບລາຍຮັບເງິນກອງທຶນການທ່ອງທ່ຽວ, ແຕ່ງຕັ້ງຄະນະກໍາມະການຮັບຜິດຊອບເງິນກອງທຶນການທ່ອງທ່ຽວ ຢູ່ຂັ້ນສູນກາງ ແລະ ຢູ່ຂັ້ນແຂວງ ເພື່ອຄຸ້ມຄອງ, ຕິດຕາມກວດກາ, ໂຄສະນາເຜີຍແຜ່ໃຫ້ພາກລັດ, ພາກທຸລະກິດ ແລະ ປະຊາຊົນເຂົ້າໃຈຢ່າງຖືກຕ້ອງ, ສ້າງແຜນການນໍາໃຊ້ເງິນກອງທຶນການທ່ອງທ່ຽວໃຫ້ຖືກຕ້ອງຕາມເປົ້າໝາຍເຂອງການນໍາໃຊ້ເງິນກອງທຶນການທ່ອງທ່ຽວ ຕາມທີ່ໄດ້ກໍານົດຢູ່ໃນດໍາລັດ ວ່າດ້ວຍກອງທຶນການທ່ອງທ່ຽວສະບັບທີ່ມີຜົນບັງຄັບໃຊ້ປັດຈຸບັນ ພ້ອມທັງສະຫຼຸບລາຍງານການຈັດຕັ້ງ ການເຄື່ອນໄຫວວຽກງານ ແລະ ລາຍຮັບ-ລາຍຈ່າຍທັງໝົດ ໃຫ້ລັດຖະມົນຕີ ກະຊວງຖະແຫຼງຂ່າວ, ວັດທະນະທໍາ ແລະ ທ່ອງທ່ຽວ ຊາບ ເປັນປົກກະຕິ 1 ເດືອນ, 3 ເດືອນ, 6 ເດືອນ ແລະ 1 ປີ ຢ່າງລະອຽດ,ຖືກຕ້ອງ ແລະ ພ້ອມກັນຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ໃຫ້ໄດ້ຮັບຜົນດີ.

**ມາດຕາ 5 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນ ເປັນຕົ້ນໄປ.

**ລັດຖະມົນຕີ**

ກະຊວງຖະແຫຼງຂ່າວ, ວັດທະນະທໍາ ... ລັດຖະມົນຕີ

**ສວນສະຫວັນ ວິຍະເກດ**

สแกนด้วย CamScanner